# ການສົ່ງເສີມການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່

## ຈະມີການຝຶກອົບຮົມ ແລະ ຊ່ວຍເຫຼືອຄູປະຖົມຄືແນວໃດແດ່?

- ຈະມີການສ້າງຄວາມຮັບຮູ້ກ່ອນການເປີດສົກຮຽນໃໝ່ໃຫ້ແກ່ຄູ, ອຳນວຍການໂຮງຮຽນ ແລະ ຄູນິເທດທຸກທ່ານ. ພະແນກສຶກສາທິການ ແລະ ກິລາແຂວງ ຈະໄດ້ຮັບການຊ່ວຍເຫຼືອທາງດ້ານງົບປະມານ ເພື່ອດຳເນີນການຝຶກອົບຮົມດັ່ງກ່າວ.
- ຈະມີປຶ້ມແນະນຳໃຫ້ແກ່ອຳນວຍການໂຮງຮຽນ ແລະ ຄູນິເທດ ກ່ຽວກັບ ວິທີການຊ່ວຍເຫຼືອຄູ.
- ຈະມີສື່ການຮຽນການສອນ ລວມທັງວິດີໂອໃນການຊ່ວຍເຫຼືອການຮຽນຮູ້ຈາກເພື່ອນຮ່ວມງານໃນລະດັບໂຮງຮຽນ ແລະ ກຸ່ມໂຮງຮຽນ ແລະ ການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ.
- ຊ່ວຍເຫຼືອອຳນວຍການໂຮງຮຽນ, ຄູນິເທດ, ແລະ ພະນັກງານຂະແໜງການສຶກສາ ກ່ຽວກັບວິທີການສອນ, ສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ແລະ ສືບຕໍ່ວຽກງານການພັດທະນາວິຊາຊີບຄູຕະຫຼອດສົກຮຽນ ໂດຍມີ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຜູ້ປະສານງານ.

## ທີມງານຝຶກອົບຮົມແມ່ນໃຜ?

- ທີມຄູຝຶກຫຼັກແຫຼ່ງຂັ້ນສູນກາງ ຈະຝຶກອົບຮົມຄູຝຶກປະຈຳແຂວງ ແລະ ມີການຕິດຕາມຊ່ວຍເຫຼືອການສອນ.
- ທີມຄູຝຶກປະຈຳແຂວງຈະຝຶກອົບຮົມຄູແບບເຊິ່ງໜ້າ ແລະ ໃຫ້ການຊ່ວຍເຫຼືອຂັ້ນໂຮງຮຽນ ແລະ ຕິດຕາມຄູ, ໂດຍການປະສານງານກັບເມືອງ ແລະ ຄູນິເທດ.
- ທັງສອງທີມປະກອບດ້ວຍຊ່ຽວຊານວິຊາການດ້ານການສຶກສາ ຈາກ ສສກ ທຸກຂັ້ນ ລວມທັງຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ວິທະຍາໄລຄູ ແລະ ໂຮງຮຽນ.
- ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະກົມສ້າງຄູຈະຕິດຕາມການຝຶກອົບຮົມ. ໜ່ວຍງານພັດທະນາຄູຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ຈະບໍລິຫານການຈັດຝຶກອົບຮົມ ແລະ ໃຫ້ການຊ່ວຍເຫຼືອຢ່າງເປັນປະຈຳ.



## ຫຼັກສູດສ້າງຄູປະຖົມ ຈະມີການປ່ຽນແປງຫຍັງແດ່?

- ການປັບປຸງຫຼັກສູດສ້າງຄູປະຖົມ (ຄູກ່ອນປະຈຳການ) ຈະຖືກປັບປຸງໃຫ້ສອດຄ່ອງກັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່.
- ຫຼັກສູດສ້າງຄູສະບັບໃໝ່ ປີ 1 ຈະຖືກທົດລອງນຳໃຊ້ໃນວິທະຍາໄລຄູທີ່ຄັດເລືອກໃນເດືອນກັນຍາ 2019 ແລະ ການຈັດຕັ້ງປະຕິບັດທົ່ວປະເທດແມ່ນຄາດວ່າຈະເລີ່ມໃນເດືອນກັນຍາ 2020 ຊຶ່ງນັກຮຽນຊຸດທຳອິດໃນຫຼັກສູດ 12+2 ຈະສຳເລັດການສຶກສາໃນປີ 2022 ແລະ ຫຼັກສູດ 12+4 ໃນປີ 2024.

## ໄລຍະເວລາສຳຄັນ

| | |
|---|---|
| ຕຸລາ-ພະຈິກ 2018 | ຄັດເລືອກຄູຝຶກຫຼັກແຫຼ່ງ ແລະ ຄູຝຶກປະຈຳແຂວງ |
| ທັນວາ 2018-ມີນາ 2019 | ຍົກລະດັບທັກສະການຝຶກອົບຮົມໃຫ້ແກ່ຄູຝຶກຫຼັກແຫຼ່ງ ແລະ ຄູຝຶກປະຈຳແຂວງ 1 |
| ພຶດສະພາ-ມິຖຸນາ 2019 | ຝຶກອົບຮົມໃຫ້ຄູຝຶກຫຼັກແຫຼ່ງ ແລະ ຄູຝຶກປະຈຳແຂວງ ກ່ຽວກັບ ຫຼັກສູດຂັ້ນ ປ. 1 |
| ມິຖຸນາ-ສິງຫາ 2019 | ແຈກຢາຍສື່ການຮຽນການສອນ ຂັ້ນ ປ. 1 ໃຫ້ແກ່ໂຮງຮຽນ |
| ກໍລະກົດ-ສິງຫາ 2019 | ຝຶກອົບຮົມໃຫ້ຄູສອນຂັ້ນ ປ. 1 |
| ກັນຍາ 2019 | ເປີດສົກຮຽນໃໝ່ ຊຶ່ງຈະນຳໃຊ້ຫຼັດສຸດຂັ້ນ ປ. 1 ສະບັບປັບປຸງໃໝ່ |
| ມິຖຸນາ-ສິງຫາ 2020 | ແຈກຢາຍສື່ການຮຽນການສອນ ຂັ້ນ ປ. 2 ໃຫ້ແກ່ໂຮງຮຽນ |
| ກໍລະກົດ-ສິງຫາ 2020 | ຝຶກອົບຮົມໃຫ້ຄູສອນຂັ້ນ ປ. 2 |
| ກັນຍາ 2020 | ເປີດສົກຮຽນໃໝ່ ຊຶ່ງຈະນຳໃຊ້ຫຼັດສຸດຂັ້ນ ປ. 2 ສະບັບປັບປຸງໃໝ່ |
| | ..... |
| ກັນຍາ 2024 | ເປີດສົກຮຽນໃໝ່ ຊຶ່ງຈະນຳໃຊ້ຫຼັດສູດຂັ້ນ ປ. 5 ສະບັບປັບປຸງໃໝ່ |

MoES

Australian Aid

European Union

*ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ, ໂດຍການສະໜັບສະໜູນຈາກລັດຖະບານ ອົດສະຕຣາລີ ແລະ ສະຫະພາບເອີຣົບ.*

# ການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່



## ຊ່ວຍປັບປຸງຜົນການຮຽນສຳລັບເດັກຍິງ ແລະ ເດັກຊາຍໃຫ້ດີຂຶ້ນ

## ພາກສະເໜີ

- ຕັ້ງແຕ່ປີ 2015, ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ສ້າງຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ຄວບຄູ່ກັບສື່ການຮຽນການສອນໃໝ່ສໍາລັບຄູແລະນັກຮຽນ. ສສກ ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່ (ສໍາລັບທຸກວິຊາຍົກເວັ້ນວິຊາຄະນິດສາດ ຊຶ່ງໄດ້ຮັບການສະໜັບສະໜູນໂດຍອົງການໄຈກາ).
- ຫຼັກສູດສະບັບປັບປຸງໃໝ່ຈະຖືກຈັດຕັ້ງປະຕິບັດໃນໂຮງຮຽນປະຖົມປີລະຂັ້ນຮຽນ.
- ວິຊາຄະນິດສາດ: ການຈັດຕັ້ງປະຕິບັດຫຼັກສູດວິຊາຄະນິດສາດສະບັບປັບປຸງໃໝ່ ຈະເລີ່ມຈາກຂັ້ນ ປ. 1 ໃນເດືອນກັນຍາ 2018, ຂັ້ນ ປ. 2 ໃນເດືອນກັນຍາ 2019 ຕາມລໍາດັບ ໄປຈົນຮອດ ຂັ້ນ ປ. 5.
- ສໍາລັບວິຊາອື່ນໆທຸກວິຊາ: ການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ສໍາລັບວິຊາອື່ນໆທັງໝົດ ຈະເລີ່ມຈາກຂັ້ນ ປ. 1 ໃນເດືອນກັນຍາ 2019 ແລະ ສໍາເລັດຂັ້ນ ປ. 5 ໃນປີ 2024.

## ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່

### ເປັນຫຍັງຈຶ່ງມີຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່?

- ເນື່ອງຈາກເປັນບຸລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ 8.
- ຜົນການຮຽນຂອງນັກຮຽນທີ່ຍັງຕໍ່າ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະການຮຽນທີ່ສູງ ຮຽກຮ້ອງໃຫ້ມີການປັບປຸງຫຼັກສູດຊັ້ນປະຖົມສຶກສາ.
- ຫຼັກສູດ ແລະ ສື່ການຮຽນການສອນສະບັບປັບປຸງໃໝ່ ຈະເປັນສ່ວນສໍາຄັນໃນການປັບປຸງຜົນການຮຽນຂອງເດັກທຸກຄົນ ແລະ ຈະເປັນການສ້າງກໍາລັງແຮງງານທີ່ມີທັກສະທີ່ດີ ແລະ ສາມາດແຂ່ງຂັນໄດ້ໃນອະນາຄົດ.

### ການປ່ຽນແປງທີ່ສໍາຄັນໃນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ມີຫຍັງແດ່?

- ການແນະນໍາເບື້ອງຕົ້ນເປັນເວລາ 1 ອາທິດ ສໍາລັບນັກຮຽນ ຂັ້ນ ປ. 1 ເພື່ອສ້າງຄວາມຄຸ້ນເຄີຍກັບຊີວິດໃນໂຮງຮຽນ ແລະ ສ້າງຄວາມໝັ້ນໃຈໃຫ້ພວກເຂົາກ່ຽວກັບກິດຈະວັດປະຈໍາວັນໃນໂຮງຮຽນ, ການປະພຶດ ແລະ ທັກສະຕ່າງໆ ທີ່ຕ້ອງນໍາໃຊ້ໃນໂຮງຮຽນ.
- ວິທີການສອນແບບໃໝ່ ໂດຍສຸມໃສ່ການຮຽນທີ່ເນັ້ນການປະຕິບັດຕົວຈິງ (active learning) ແລະ ນັກຮຽນເປັນໃຈກາງ ເພື່ອການຮຽນຮູ້ ແລະ ເອົານັກຮຽນເປັນໃຈກາງ. ນັກຮຽນຈະຮຽນຮູ້ໂດຍການເຮັດກິດຈະກໍາຕ່າງໆ ແລະ ນໍາໃຊ້ຄວາມຮູ້ໃໝ່ໃນຫ້ອງຮຽນຮ່ວມ.
- ເພື່ອສົ່ງເສີມການຮຽນຮ່ວມໃຫ້ຫຼາຍຂຶ້ນ, ເນື້ອໃນຂອງຫຼັກສູດສະບັບປັບປຸງໃໝ່ ໄດ້ຖືກຈັດລໍາດັບເພື່ອຊ່ວຍຄູສອນຫ້ອງຄວບໃນການວາງແຜນ ແລະ ດໍາເນີນການສອນໄດ້ດີຂຶ້ນ.
- ວິທີການສອນທີ່ອີງໃສ່ຄວາມສາມາດຂອງນັກຮຽນເປັນຫຼັກ ແລະ ວິທີການປະເມີນນັກຮຽນແບບໃໝ່ ເພື່ອຕິດຕາມນັກຮຽນໃນການຮຽນຮູ້ທັດສະນະທີ່ດີ, ຮຽນຄວາມຮູ້ໃໝ່ ແລະ ທັກສະໃໝ່.

### ຈະມີການສະໜອງສື່ການຮຽນການສອນຫຍັງແດ່?

- ປຶ້ມແບບຮຽນ: ຈະມີສີສັນ ແລະ ພາບປະຈັກຕາຢ່າງຫຼວງຫຼາຍ ເພື່ອເພີ່ມຄວາມສົນໃຈ ແລະ ການຈື່ຈໍາ ຊຶ່ງເນື້ອໃນໄດ້ມີການປັບປຸງໃໝ່ (ແຈກຢາຍໃຫ້ນັກຮຽນ 1 ຊຸດ/ຄົນ).
- ຄູ່ມືຄູ: ມີລາຍລະອຽດກ່ຽວກັບການສອນບົດຮຽນ, ບົດແນະນໍາ ແລະ ຄໍາແນະນໍາຕ່າງໆ ໃນການນໍາໃຊ້ຄວາມຮູ້ໃນທ້ອງຖິ່ນ, ສ້າງກິດຈະກໍາເພີ່ມເຕີມ, ການສອນຫ້ອງຄວບ, ແລະ ການສອນນັກຮຽນທີ່ບໍ່ເວົ້າພາສາລາວເປັນພາສາແມ່ (ແຈກຢາຍໃຫ້ຄູ 1 ຫົວ/ຄົນ/ວິຊາ).
- ສື່ການຮຽນການສອນ ເຊັ່ນ: ບັດຄໍາສັບ ແລະ ໂປສະເຕີ້ ສໍາລັບການຈັດກິດຈະກໍາໃນຫ້ອງຮຽນ ຊຶ່ງປະກອບມີ ປຶ້ມນິທານທີ່ເໝາະສົມຕາມເກນອາຍຸ ເພື່ອຊ່ວຍການຮຽນການສອນວິຊາພາສາລາວ, ຊຸດປຶ້ມອ່ານເສີມທີ່ເໝາະສົມຕາມຂັ້ນຮຽນ ເພື່ອຊ່ວຍພັດທະນາການຮູ້ໜັງສືສໍາລັບນັກຮຽນຂັ້ນ ປ. 1 ແລະ ປ. 2 (ແຈກຢາຍໃຫ້ 1ຊຸດ/ຫ້ອງ).
- ເນື້ອໃນປຶ້ມແບບຮຽນ, ສື່ການຮຽນການສອນ ແລະ ກິດຈະກໍາຕ່າງໆ ໄດ້ຖືກອອກແບບຢ່າງຮອບຄອບ ເພື່ອຮັບປະກັນວ່າຫຼັກສູດສະບັບປັບປຸງໃໝ່ແມ່ນມີຄວາມພໍດີ ແລະ ເໝາະສົມກັບນັກຮຽນທຸກຄົນ.

**ຫຼັກສູດສະບັບປັບປຸງໃໝ່ຈະຖືກຈັດຕັ້ງປະຕິບັດຕາມຂັ້ນຮຽນ ເລີ່ມຈາກຂັ້ນ ປ. 1 ໃນເດືອນກັນຍາ 2019***

**ໂຮງຮຽນປະຖົມທຸກແຫ່ງຈະໄດ້ຮັບຄູ່ມືຄູ ແລະ ປຶ້ມແບບຮຽນ ພ້ອມທັງສື່ການຮຽນການສອນສະບັບປັບປຸງໃໝ່**

**ນັກຮຽນທຸກຄົນຈະໄດ້ຮັບຊຸດປຶ້ມແບບຮຽນໃໝ່**

**ຈະມີຄູຝຶກຫຼັກແຫຼ່ງຫຼາຍກວ່າ 50 ທ່ານ ແລະ ຄູຝຶກປະຈໍາແຂວງຫຼາຍກວ່າ 600 ທ່ານ**

**ຄູທຸກຄົນຈະໄດ້ຮັບການຝຶກອົບຮົມກ່ຽວກັບວິທີສອນໃໝ່**

**ອໍານວຍການໂຮງຮຽນ ແລະ ຄູນິເທດທຸກທ່ານ ຈະໄດ້ຮັບການຝຶກອົບຮົມເພີ່ມເຕີມກ່ຽວກັບວິທີການສະໜັບສະໜູນຊ່ວຍເຫຼືອຄູຢ່າງຕໍ່ເນື່ອງ.**

**ທຸກສື່ການຮຽນການສອນໄດ້ຮັບການທົດລອງນໍາໃຊ້ໃນໂຮງຮຽນປະຖົມ ແລະ ໄດ້ຮັບການປັບປຸງອີງຕາມຄໍາເຫັນຈາກການທົດລອງ**

*ຍົກເວັ້ນວິຊາຄະນິດສາດແມ່ນໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນກັນຍາ 2018.





